ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 114 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 21.6.2017

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍສານປະຊາຊົນ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 09/ສພຊ, ລົງວັນທີ 10 ພຶດສະພາ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍສານປະຊາຊົນ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 014/ຄປຈ, ລົງວັນທີ 08 ມິຖຸນາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍ ວ່າດ້ວຍສານປະຊາຊົນ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 09 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10/05/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສານປະຊາຊົນ (ສະບັບປັບປຸງ)

---

ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສານປະຊາຊົນ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍຂອງ ວັນທີ 10 ພຶດສະພາ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສານປະຊາຊົນ(ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                                 ເລກທີ 22 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 ພຶດສະພາ 2017

# ກົດໝາຍ
# ວ່າດ້ວຍສານປະຊາຊົນ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ, ກວດກາຂອງສານປະຊາຊົນ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງສານ ໃຫ້ມີຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ແລະ ເຮັດໃຫ້ການດຳເນີນຄະດີ ເປັນຕົ້ນ ການພິຈາລະນາຕັດສິນ ແລະ ພິພາກສາຄະດີ ມີຄວາມວ່ອງໄວ, ໂປ່ງໃສ, ພາວະວິໄສ, ຖືກຕ້ອງ ແລະ ຍຸຕິທຳ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເສດຖະກິດ-ສັງຄົມ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ.

**ມາດຕາ 2 ສານປະຊາຊົນ**

ສານປະຊາຊົນ ແມ່ນ ອົງການຕຸລາການ ທີ່ເຮັດໜ້າທີ່ພິຈາລະນາຕັດສິນຄະດີ.

ຢູ່ ສປປ ລາວ ມີແຕ່ສານເທົ່ານັ້ນ ຈຶ່ງມີສິດອຳນາດພິຈາລະນາຕັດສິນ, ພິພາກສາຄະດີ ບົນພື້ນຖານຫຼັກຖານ, ການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະນັກງານສານປະຊາຊົນ** ໝາຍເຖິງ ປະທານ, ຮອງປະທານ, ຫົວໜ້າ, ຮອງຫົວໜ້າຄະນະສານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ, ພະນັກງານວິຊາການ ແລະ ພະນັກງານບໍລິຫານ;

2. **ຄຳຕົກລົງຂອງສານ** ໝາຍເຖິງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ;

3. **ຄຳສັ່ງຂອງສານ** ໝາຍເຖິງ ຄຳຕົກລົງປະເພດໜຶ່ງຂອງສານກ່ຽວກັບການດຳເນີນຄະດີ ເຊັ່ນ ຄຳສັ່ງຍຶດຊັບ ຫຼື ອາຍັດຊັບ, ຄຳສັ່ງຊັດມ້ຽນຄະດີ, ຄຳສັ່ງຈັບຕົວ ແລະ ອື່ນໆ;

4. **ຄຳຊີ້ຂາດຂອງສານ** ໝາຍເຖິງ ຄຳຕົກລົງປະເພດໜຶ່ງຂອງສານກ່ຽວກັບການຊີ້ຂາດສິດອຳນາດຂອງສານ, ຂອງຄະນະສານ, ການບໍ່ຮັບເອົາຄະດີມາພິຈາລະນາ, ຄຳຕັດສິນປະຫານຊີວິດ ແລະ ອື່ນໆ;

5. **ຄຳຕັດສິນຂອງສານ** ໝາຍເຖິງ ຄຳຕັດສິນຂອງສານຂັ້ນຕົ້ນ;

6. **ຄຳພິພາກສາຂອງສານ** ໝາຍເຖິງ ຄຳຕັດສິນ ຂອງສານຂັ້ນອຸທອນ ແລະ ຂັ້ນລົບລ້າງ;

7. **ຄູ່ຄວາມ** ໝາຍເຖິງ ໂຈດ ແລະ ຈຳເລີຍ ລວມທັງບຸກຄົນທີສາມໃນຄະດີ;

8. **ຜູ້ປົກປ້ອງອື່ນ** ໝາຍເຖິງ ທະນາຍຄວາມ, ຜູ້ຕາງໜ້າອົງການຈັດຕັ້ງ, ຜົວ ຫຼື ເມຍ, ພໍ່,ແມ່, ຜູ້ປົກຄອງ ຫຼື ຍາດໃກ້ຊິດ ທີ່ເຂົ້າຮ່ວມໃນການດຳເນີນຄະດີຕາມການມອບໝາຍ ຫຼື ຕາມກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສຍຫາຍ,ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ;

9. **ທະນາຍຄວາມ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ຕາມກົດໝາຍ;

10. **ໝາຍຮຽກຂອງສານ** ໝາຍເຖິງ ໜັງສືທີ່ອອກໂດຍສານ ເພື່ອຮຽກຕົວໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານ ແລະ ຜູ້ເຂົ້າຮ່ວມຄົນອື່ນໃນການດຳເນີນຄະດີ ເຂົ້າມາສານຕາມວັນເວລາ ແລະ ສະຖານທີ່ ຊຶ່ງໄດ້ກຳນົດໄວ້ໃນໝາຍຮຽກ;

11. **ປະເພນີສານ** ໝາຍເຖິງ ຄຳພິພາກສາຂອງສານປະຊາຊົນສູງສຸດ ກ່ຽວກັບບັນຫາໃດໜຶ່ງໃນຄະດີອາຍາ ຊຶ່ງກົດໝາຍກຳນົດໄວ້ບໍ່ຊັດເຈນ; ຄະດີແພ່ງ, ການຄ້າ, ແຮງງານ, ປົກຄອງ, ຄອບຄົວ ແລະ ເດັກ ຊຶ່ງກົດໝາຍບໍ່ໄດ້ກຳນົດ ຫຼື ໄດ້ກຳນົດໄວ້ ແຕ່ບໍ່ຈະແຈ້ງ ເພື່ອເປັນບ່ອນອີງໃຫ້ສານປະຊາຊົນທຸກຂັ້ນ ໄດ້ປະຕິບັດຕາມ;

12. **ຈ່າສານ** ໝາຍເຖິງ ພະນັກງານທີ່ໄດ້ຮັບການແຕ່ງຕັ້ງໃຫ້ເຮັດວຽກຊ່ວຍຄະນະສານໃນການປະກອບ ແລະ ຄຸ້ມຄອງສຳນວນຄະດີ, ບັນທຶກຄຳໃຫ້ການ, ກະກຽມ ແລະ ບັນທຶກປຶ້ມປະຊຸມສານ ແລະ ວຽກງານອື່ນ ຕາມການມອບໝາຍຂອງຄະນະສານ;

13. **ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ** ໝາຍເຖິງ ຄຳຕັດສິນ, ຄຳພິພາກສາຂອງສານ ຊຶ່ງໂຈດ, ຈຳເລີຍ, ບຸກຄົນທີສາມ ບໍ່ໄດ້ຂໍອຸທອນ, ຂໍລົບລ້າງ ຫຼື ໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ, ຄຳພິພາກສາຂັ້ນລົບລ້າງຂອງສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານສານປະຊາຊົນ

ລັດ ສົ່ງເສີມ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ການເຄື່ອນໄຫວປະຕິບັດໜ້າທີ່ຂອງສານດ້ວຍການວາງນະໂຍບາຍ, ລະບຽບ, ກົດໝາຍ, ການສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ສ້າງພື້ນຖານໂຄງລ່າງໃຫ້ເໝາະສົມ ຕາມຄວາມສາມາດຕົວຈິງ ເພື່ອໃຫ້ການພິຈາລະ

ນາຕັດສິນ ແລະ ພິພາກສາຄະດີ ມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງ ແລະ ຮັບປະກັນຄວາມຍຸຕິທຳໃນສັງຄົມ.

ລັດ ຊຸກຍູ້, ສົ່ງເສີມ ແລະເອົາໃຈໃສ່ໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ເຂົ້າເຖິງຂະບວນການຍຸຕິທຳ ພ້ອມທັງຊຸກຍູ້ ອຳນວຍຄວາມສະດວກໃຫ້ມີຄະນະສານເຄື່ອນທີ່.

**ມາດຕາ 5 (ປັບປຸງ) ຂັ້ນການພິຈາລະນາຕັດສິນຂອງສານ**

ສານປະຊາຊົນ ຕັດສິນຄະດີເປັນ ສາມຂັ້ນ ຄື:

- ຂັ້ນຕົ້ນ;
- ຂັ້ນອຸທອນ;
- ຂັ້ນລົບລ້າງ.

ຄະດີທີ່ຄູ່ຄວາມຮັບຮູ້ນຳກັນແລ້ວ, ຄະດີທີ່ມີລັກສະນະເບົາ ຫຼື ມີມູນຄ່າບໍ່ສູງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ, ການດຳເນີນຄະດີເດັກ ແລະ ການດຳເນີນຄະດີແພ່ງ ຈະໄດ້ຮັບການພິຈາລະນາເປັນຂັ້ນຕົ້ນ ແລະ ຂັ້ນອຸທອນເທົ່ານັ້ນ ໂດຍບໍ່ໃຫ້ສິດຂໍລົບລ້າງ ເວັ້ນເສຍແຕ່ໄດ້ຮັບການຕົກລົງເຫັນດີຂອງປະທານຄະນະສານຂັ້ນອຸທອນ ໃນກໍລະນີມີການລະເມີດກົດໝາຍ ເຊັ່ນ ການປະກອບຄະນະສານ, ສານບໍ່ມີສິດອຳນາດ ຫຼື ສານຕັດສິນເກີນສິດອຳນາດ, ການລະເມີດຫຼັກການຂອງການໄຕ່ສວນຄະດີ, ການຕີຄວາມໝາຍຂອງເຫດການ ຫຼື ການນຳໃຊ້ກົດໝາຍບໍ່ຖືກຕ້ອງ.

ສານປະຊາຊົນເຂດ ຕັດສິນເປັນຂັ້ນຕົ້ນ ຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ.

ສານປະຊາຊົນ ແຂວງ, ນະຄອນຫຼວງ ຕັດສິນຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍເປັນຂັ້ນຕົ້ນ ຄະດີທີ່ບໍ່ຢູ່ໃນສິດອຳນາດຂອງສານປະຊາຊົນເຂດ ຫຼື ເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນເຂດໄດ້ຕັດສິນເປັນຂັ້ນຕົ້ນແລ້ວ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ.

ສານປະຊາຊົນພາກ ພິພາກສາເປັນຂັ້ນອຸທອນ ຕາມຂໍ້ມູນຫຼັກຖານ ແລະ ຕາມກົດໝາຍ ຄະດີທີ່ສານປະຊາຊົນ ແຂວງ, ນະຄອນຫຼວງ ແລະ ສານເດັກ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ; ພິຈາລະນາເປັນຂັ້ນລົບລ້າງທາງດ້ານກົດໝາຍ ຄະດີທີ່ສານປະຊາຊົນ ແຂວງ, ນະຄອນຫຼວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ.

ສານປະຊາຊົນສູງສຸດ ພິພາກສາເປັນຂັ້ນລົບລ້າງ ທາງດ້ານກົດໝາຍ ຄະດີທີ່ສານປະຊາຊົນພາກ ແລະ ສານທະຫານຂັ້ນສູງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ ແລະ ໄອຍະການທະຫານ.

ມາດຕາ 6 ການປົກປ້ອງ

ຜູ້ພິພາກສາ, ພະນັກງານຂອງສານປະຊາຊົນ ລວມທັງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ຕ້ອງໄດ້ຮັບການປົກປ້ອງ ຕາມກົດໝາຍ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ.

ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນກ່ຽວກັບວຽກງານຂອງສານປະຊາຊົນ ເປັນຕົ້ນ ການຮ່ວມມືທາງດ້ານກົດໝາຍ ແລະ ຍຸຕິທຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ຫຼື ສຳມະນາ, ຍົກລະດັບຄວາມຮູ້ ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານການສອບສວນ ແລະ ປະກອບຫຼັກຖານ, ການຕັດສີນ ແລະ ພິພາກສາຄະດີ ໃຫ້ມີຄຸນນະພາບ, ໂປ່ງໃສ ແລະ ຮັບປະກັນຄວາມຍຸຕິທຳໃນສັງຄົມ ລວມທັງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຫຼັກການພື້ນຖານໃນການດຳເນີນຄະດີຢູ່ສານ

ມາດຕາ 8 (ປັບປຸງ) ຫຼັກການພື້ນຖານໃນການດຳເນີນຄະດີຢູ່ສານ

ການດຳເນີນຄະດີຢູ່ສານ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຮັບປະກັນຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ;
2. ຮັບປະກັນສິດຂອງພົນລະເມືອງໃນການຕໍ່ສູ້ຄະດີ;
3. ຮັບປະກັນ ຄວາມເປັນເອກະລາດໃນເວລາດຳເນີນຄະດີ;
4. ເຄົາລົບ ແລະ ປະຕິບັດກົດໝາຍໃນການພິຈາລະນາຄະດີ;
5. ຮັບປະກັນ ການພິຈາລະນາຄະດີເປັນໝູ່ຄະນະ;
6. ໃຫ້ໃຊ້ພາສາລາວໃນການດຳເນີນຄະດີ;
7. ຮັບປະກັນການພິຈາລະນາຄະດີຢູ່ທີ່ປະຊຸມສານຢ່າງເປີດເຜີຍ;
8. ເຄົາລົບ ແລະ ຈັດຕັ້ງປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານຢ່າງເຂັ້ມງວດ.

ມາດຕາ 9 ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ

ພົນລະເມືອງລາວທຸກຄົນ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານໂດຍບໍ່ຈຳແນກເພດ, ເຊື້ອຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ.

ພົນລະເມືອງລາວ ມີສິດຮ້ອງຟ້ອງຕໍ່ສານ ກ່ຽວກັບຂໍ້ຂັດແຍ່ງທາງແພ່ງ ແລະ ມີສິດຮ້ອງຟ້ອງຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການປະຊາຊົນ ເມື່ອມີການລະເມີດທາງອາຍາ.

ຄົນຕ່າງປະເທດ, ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດ ທີ່ຢູ່ໃນດິນແດນ ສປປ ລາວ ມີສິດເທົ່າທຽມກັນກັບພົນລະເມືອງລາວ ຖ້າຫາກກົດໝາຍບໍ່ໄດ້ກຳນົດໄວ້ຢ່າງອື່ນ.

### ມາດຕາ 10 (ປັບປຸງ) ສິດໃນການຕໍ່ສູ້ຄະດີ

ຜູ້ຖືກຫາໃນຄະດີອາຍາ ແລະ ຄູ່ຄວາມໃນຄະດີແພ່ງ ມີສິດຕໍ່ສູ້ຄະດີດ້ວຍຕົນເອງ ຫຼື ຜູ້ປົກປ້ອງ ຫຼື ທະນາຍຄວາມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

ລະບຽບການເຂົ້າຮ່ວມຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃນການດຳເນີນຄະດີ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ທະນາຍຄວາມ, ການດຳເນີນຄະດີອາຍາ, ການດຳເນີນຄະດີເດັກ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

### ມາດຕາ 11 ຄວາມເປັນເອກະລາດຂອງສານ

ໃນການໄຕ່ສວນ ແລະ ພິຈາລະນາຕັດສິນຄະດີ ສານມີຄວາມເປັນເອກະລາດ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

### ມາດຕາ 12 (ປັບປຸງ) ການພິຈາລະນາຄະດີຕາມກົດໝາຍ

ໃນການພິຈາລະນາຕັດສິນຄະດີ ສານຕ້ອງອີງໃສ່ຫຼັກຖານ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ. ໃນກໍລະນີທີ່ມີບັນຫາໃດໜຶ່ງ ຫາກບໍ່ໄດ້ກຳນົດໄວ້ໃນກົດໝາຍ ສານຕ້ອງຕັດສິນບັນຫານັ້ນໃຫ້ສອດຄ່ອງກັບຫຼັກການນິຕິທຳ ແລະ ປະເພນີສານ. ສຳລັບການກະທຳໃດໜຶ່ງທີ່ບໍ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍານັ້ນ ສານຈະນຳມາຕັດສິນລົງໂທດທາງອາຍາບໍ່ໄດ້.

ຄຳພິພາກສາຂອງສານປະຊາຊົນສູງສຸດ ກ່ຽວກັບບັນຫາໃດໜຶ່ງໃນຄະດີອາຍາ ຊຶ່ງກົດໝາຍກຳນົດໄວ້ບໍ່ຊັດເຈນ, ຄະດີແພ່ງ, ການຄ້າ, ແຮງງານ, ປົກຄອງ, ຄອບຄົວ ແລະ ເດັກ ຊຶ່ງກົດໝາຍບໍ່ໄດ້ກຳນົດ ຫຼື ໄດ້ກຳນົດໄວ້ ແຕ່ບໍ່ຈະແຈ້ງນັ້ນ ໃຫ້ຖືເປັນປະເພນີສານ ຊຶ່ງສານປະຊາຊົນທຸກຂັ້ນຕ້ອງໄດ້ປະຕິບັດຕາມຈົນກວ່າບັນຫານັ້ນ ຈະໄດ້ກຳນົດໄວ້ໃນກົດໝາຍ. ສຳລັບຄຳພິພາກສາຂອງສານຂັ້ນລຶບລ້າງຂອງສານປະຊາຊົນພາກນັ້ນ ຈະເປັນປະເພນີສານໄດ້ກໍຕໍ່ເມື່ອມີຄຳແນະນຳຂອງສານປະຊາຊົນສູງສຸດ.

### ມາດຕາ 13 (ປັບປຸງ) ການພິຈາລະນາຄະດີຄະດີເປັນໝູ່ຄະນະ

ຄະນະສານຕັດສິນຂອງ ສານປະຊາຊົນສູງສຸດ, ສານປະຊາຊົນພາກ, ສານປະຊາຊົນແຂວງ, ນະຄອນຫຼວງ, ສານປະຊາຊົນເຂດ ແລະ ສານທະຫານ ປະກອບດ້ວຍ ຜູ້ພິພາກສາສາມຄົນ, ໃນນັ້ນໜຶ່ງຄົນເປັນປະທານ ແລະ ອີກສອງຄົນເປັນຄະນະ ຍົກເວັ້ນຄະດີເບົາບາງ, ເລັກນ້ອຍ, ມີມູນຄ່າບໍ່ສູງ ຫຼື ໂຈດ ແລະ ຈຳເລີຍຮັບຮູ້ນຳກັນແລ້ວ ໃຫ້ຜູ້ພິພາກສາຜູ້ດຽວ ພິຈາລະນາຕັດສິນເປັນຂັ້ນຕົ້ນກໍໄດ້.

ຄຳຕົກລົງຂອງຄະນະສານ ຕ້ອງຖືເອົາຕາມສຽງສ່ວນຫຼາຍ.

ການພິຈາລະນາຕັດສິນຄະດີ ຕ້ອງຮັບປະກັນຄວາມລັບ.

ການພິຈາລະນາຕັດສິນໂດຍຜູ້ພິພາກສາຜູ້ດຽວໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 14 ພາສາທີ່ໃຊ້ໃນການດຳເນີນຄະດີ**

ໃນການດຳເນີນຄະດີ ໃຫ້ໃຊ້ພາສາລາວ. ຜູ້ເຂົ້າຮ່ວມໃນການດຳເນີນຄະດີທີ່ບໍ່ຮູ້ພາສາລາວ ມີສິດໃຊ້ພາສາຂອງຕົນເອງ ຫຼື ພາສາອື່ນ ໂດຍຜ່ານຜູ້ແປພາສາ.

**ມາດຕາ 15 ການພິຈາລະນາຄະດີຢູ່ທີ່ປະຊຸມສານຢ່າງເປີດເຜີຍ**

ການພິຈາລະນາຄະດີຢູ່ທີ່ປະຊຸມສານ ຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສຍແຕ່ກໍລະນີທີ່ຄະດີນັ້ນກ່ຽວຂ້ອງກັບຄວາມລັບຂອງລັດ ຫຼື ຂອງສັງຄົມ ແລະ ຄະດີເດັກນັ້ນ ຕ້ອງດຳເນີນຢ່າງປິດລັບ.

**ມາດຕາ 16 (ປັບປຸງ) ຜົນສັກສິດຂອງຄຳຕັດສິນຂອງສານ**

ສານ ອອກຄຳຕົກລົງໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ; ບຸກຄົນ ແລະ ການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 98 ຂອງລັດຖະທຳມະນູນ.

ຄຳຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນມີຜົນບັງຄັບປະຕິບັດ ແລະ ບໍ່ສາມາດປ່ຽນແປງໄດ້ແຕ່ຢ່າງໃດ ເວັ້ນເສຍແຕ່ກໍລະນີພິເສດ ເປັນຕົ້ນ ມີຫຼັກຖານໃໝ່ ຈຶ່ງມີສິດສະເໜີຮື້ຟື້ນຄະດີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ III
## ການຈັດຕັ້ງສານປະຊາຊົນ

### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່

**ມາດຕາ 17 ທີ່ຕັ້ງ ແລະ ພາລະບົດບາດຂອງສານປະຊາຊົນ**

ສານປະຊາຊົນ ແມ່ນ ອົງການຕຸລາການ, ມີພາລະບົດບາດດຳເນີນການພິຈາລະນາຕັດສິນ, ພິພາກສາຄະດີ ແນໃສ່ສຶກສາອົບຮົມພົນລະເມືອງ ໃຫ້ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ ປະຊາຊົນ, ປົກປັກຮັກສາ ແລະ ເສີມຂະຫຍາຍໝາກຜົນຂອງການປະຕິວັດ, ລະບອບການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ, ປົກປັກຮັກສາສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ຮັບປະກັນຄວາມຍຸຕິທຳ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ເພີ່ມທະວີນິຕິທຳ, ກຳຈັດ ແລະ ສະກັດກັ້ນການລະເມີດກົດໝາຍ.

**ມາດຕາ 18 ສິດ ແລະ ໜ້າທີ່ຂອງສານປະຊາຊົນ**

ສານປະຊາຊົນ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມ, ພິຈາລະນາຕັດສິນຄະດີ;

2. ໂຄສະນາ, ເຜີຍແຜ່ລະບຽບ, ກົດໝາຍ, ຊອກຫາ, ກຳຈັດສາເຫດ ແລະ ເງື່ອນໄຂທີ່ພາໃຫ້ມີການກະທຳຜິດ;

3. ຍົກລະດັບຄວາມຮູ້ທາງດ້ານການເມືອງ, ສະຕິເຄົາລົບ ແລະ ປະຕິບັດກົດໝາຍ ຂອງພົນລະເມືອງໃຫ້ສູງຂຶ້ນ;

4. ປະສານສົມທົບກັບອົງການຕ່າງໆທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງຕົນ;

5. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ສະຫຼຸບ, ລາຍງານການເຄື່ອນໄຫວ ແລະ ປະຕິບັດໜ້າທີ່ຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ.

## ໝວດທີ 2
## ລະບົບການຈັດຕັ້ງ

**ມາດຕາ 19 (ປັບປຸງ) ລະບົບການຈັດຕັ້ງຂອງສານປະຊາຊົນ**

ລະບົບການຈັດຕັ້ງຂອງສານປະຊາຊົນ ແຫ່ງ ສປປ ລາວ ປະກອບດ້ວຍ:

1. ສານປະຊາຊົນສູງສຸດ;
2. ສານປະຊາຊົນທ້ອງຖິ່ນ ປະກອບດ້ວຍ:
   - ສານປະຊາຊົນພາກ;
   - ສານປະຊາຊົນແຂວງ, ນະຄອນຫຼວງ ແລະ ສານເດັກ;
   - ສານປະຊາຊົນເຂດ.
3. ສານທະຫານ.

ໃນກໍລະນີຈຳເປັນ ອາດສ້າງຕັ້ງສານສະເພາະຕາມຂະແໜງການ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 20 ສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດ ແມ່ນ ອົງການພິພາກສາສູງສຸດຂອງ ສປປ ລາວ, ມີພາລະບົດບາດດຳເນີນການພິພາກສາຄະດີ, ຄຸ້ມຄອງທາງດ້ານການຈັດຕັ້ງ, ບໍລິຫານ, ກວດກາທາງດ້ານວິຊາສະເພາະ, ຊີ້ນຳການເຄື່ອນໄຫວ, ການປະຕິບັດໜ້າທີ່ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານໃນທົ່ວປະເທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສານປະຊາຊົນສູງສຸດ ຕັ້ງຢູ່ນະຄອນຫຼວງວຽງຈັນ.

**ມາດຕາ 21 ສິດ ແລະ ໜ້າທີ່ຂອງສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາເປັນຂັ້ນລົບລ້າງ ທາງດ້ານກົດໝາຍ ຄະດີທີ່ສານປະຊາຊົນພາກ ແລະ ສານທະຫານຂັ້ນສູງ ໄດ້ພິຈາລະນາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ ແລະ ໄອຍະການທະຫານ;

2. ພິຈາລະນາເປັນຂັ້ນຮື້ຟື້ນ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

3. ແນະນຳທາງດ້ານປະເພນີສານ, ອະທິບາຍເນື້ອໃນຂອງກົດໝາຍໃນຂົງເຂດທີ່ຕົນຮັບຜິດຊອບ ໃຫ້ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;

4. ແນະນຳ ແລະ ກວດກາຄວາມຖືກຕ້ອງ ແລະ ຄວາມເປັນເອກະພາບທາງດ້ານກົດໝາຍໃນການດຳເນີນຄະດີຂອງ ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ;

5. ຄົ້ນຄວ້າກ່ຽວກັບສິດອຳນາດຂອງສານໃນທົ່ວປະເທດ;

6. ເຮັດບົດອະທິບາຍມະຕິກອງປະຊຸມໃຫຍ່ຜູ້ພິພາກສາ ເພື່ອໃຫ້ສານປະຊາຊົນທຸກຂັ້ນ ແລະ ສານທະຫານເຂົ້າໃຈ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ;

7. ຊີ້ນຳວຽກງານຄົ້ນຄວ້າ ແລະ ສະເໜີຮ່າງກົດໝາຍ, ນິຕິກຳອື່ນ ແລະ ສະເໜີການຕີຄວາມໝາຍກົດໝາຍ ຕໍ່ຄະນະປະຈຳສະພາແຫ່ງຊາດ;

8. ຊີ້ນຳ ແລະ ຄຸ້ມຄອງສານປະຊາຊົນພາກ, ສານປະຊາຊົນແຂວງ, ນະຄອນຫຼວງ, ສານເດັກ ແລະ ສານປະຊາຊົນເຂດ ທາງດ້ານການຈັດຕັ້ງ, ບໍລິຫານ ແລະ ກວດກາທາງດ້ານວິຊາສະເພາະຂອງສານດັ່ງກ່າວ;

9. ວາງມາດຕະການອັນຈຳເປັນກ່ຽວກັບບັນຫາການຈັດຕັ້ງ, ການປັບປຸງ ແລະ ການບໍລິຫານສານ;

10. ຊີ້ນຳວຽກງານສ້າງຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານຂອງສານ;

11. ກວດກາການຈັດຕັ້ງປະຕິບັດວຽກງານຂອງສານ, ຄົ້ນຄວ້າ ແລະ ສັງລວມພາກປະຕິບັດຂອງສານ, ຈັດຕັ້ງວຽກງານສະຖິຕິສານ, ເຮັດບົດວິໄຈສະຖິຕິສານ ແລະ ວຽກງານອື່ນຂອງສານ;

12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍ;

13. ສະຫຼຸບ, ລາຍງານການເຄື່ອນໄຫວ ແລະ ການປະຕິບັດໜ້າທີ່ຂອງຕົນຕໍ່ສະພາແຫ່ງຊາດ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 (ປັບປຸງ) ສານປະຊາຊົນພາກ**

ສານປະຊາຊົນພາກ ແມ່ນ ສານໜຶ່ງໃນລະບົບສານປະຊາຊົນ ມີພາລະບົດບາດດຳເນີນການພິພາກສາຄະດີ ເປັນຂັ້ນອຸທອນ ຄະດີທີ່ສານປະຊາຊົນແຂວງ, ນະຄອນຫຼວງ, ສານເດັກ ໄດ້ຕັດສິນເປັນ

ຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ; ເປັນຂັ້ນລົບລ້າງ ຄະດີທີ່ສານປະຊາຊົນ ແຂວງ, ນະຄອນຫຼວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍໄອຍະການປະຊາຊົນ.

ສານປະຊາຊົນພາກ ຕັ້ງຢູ່ນະຄອນຫຼວງ ຫຼື ແຂວງໃດໜຶ່ງ ໂດຍກວມເອົານະຄອນຫຼວງ, ແຂວງຈຳນວນໜຶ່ງ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງສານປະຊາຊົນພາກ**

ສານປະຊາຊົນພາກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄະດີ ທີ່ສານປະຊາຊົນ ແຂວງ, ນະຄອນຫຼວງ ແລະ ສານເດັກ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ;

2. ພິຈາລະນາເປັນຂັ້ນລົບລ້າງ ຄຳສັ່ງ, ຄຳຊີ້ຂາດ ແລະ ຄະດີ ທີ່ສານປະຊາຊົນ ແຂວງ, ນະຄອນຫຼວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍໄອຍະການປະຊາຊົນ;

3. ທວງເອົາຄະດີຈາກ ສານປະຊາຊົນ ແຂວງ, ນະຄອນຫຼວງ ມາດຳເນີນ ແລະ ພິຈາລະນາເປັນຂັ້ນອຸທອນ ດ້ວຍຕົນເອງ ຖ້າເຫັນວ່າຄະດີນັ້ນມີຄວາມສຳຄັນ ຫຼື ມີຄວາມຫຍຸ້ງຍາກເປັນພິເສດ ຕາມລະບຽບການ ດ້ວຍການເຫັນດີຂອງຄະນະປະທານ;

4. ຜັນຂະຫຍາຍຄຳແນະນຳທາງດ້ານກົດໝາຍ ແລະ ປະເພນີສານຂອງສານປະຊາຊົນສູງສຸດ ໃຫ້ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານເດັກ ແລະ ສານປະຊາຊົນເຂດ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ເປັນເອກະພາບໃນການປະຕິບັດກົດໝາຍ;

5. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ, ກວດກາທາງດ້ານວິຊາສະເພາະຂອງສານປະຊາຊົນຂັ້ນລຸ່ມ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

6. ຄົ້ນຄວ້າ ສັງລວມການຈັດຕັ້ງປະຕິບັດໜ້າທີ່ ແລະ ເກັບກຳສະຖິຕິຄະດີຂອງສານ;

7. ສົ່ງຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາໃຫ້ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນພາກ ເພື່ອກວດກາ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍ ຕາມການມອບໝາຍຂອງຂັ້ນເທິງ;

9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວ ແລະ ການປະຕິບັດໜ້າທີ່ຂອງຕົນຕໍ່ສານປະຊາຊົນສູງສຸດ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 24 (ປັບປຸງ) ສານປະຊາຊົນ ແຂວງ, ນະຄອນຫຼວງ ແລະ ສານເດັກ**

ສານປະຊາຊົນ ແຂວງ, ນະຄອນຫຼວງ ແມ່ນ ສານໜຶ່ງໃນລະບົບສານປະຊາຊົນ, ມີພາລະບົດບາດດຳເນີນການຕັດສິນຄະດີເປັນຂັ້ນຕົ້ນ ຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເຂດ ຫຼື ພິພາກສາເປັນຂັ້ນອຸທອນຄະດີທີ່ສານປະຊາຊົນເຂດ ໄດ້ຕັດສິນເປັນຂັ້ນຕົ້ນແລ້ວ.

ໃນແຕ່ລະ ແຂວງ, ນະຄອນຫຼວງ ມີການສ້າງຕັ້ງສານປະຊາຊົນ ແຂວງ, ນະຄອນຫຼວງ ແລະ ສານເດັກ.

ສຳລັບສານເດັກນັ້ນ ຖືກສ້າງຕັ້ງຂຶ້ນ ຕາມການອະນຸຍາດຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 25 (ປັບປຸງ) ສິດ ແລະ ໜ້າທີ່ຂອງສານປະຊາຊົນ ແຂວງ, ນະຄອນຫຼວງ ແລະ ສານເດັກ**

ສານປະຊາຊົນ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກຄຳສັ່ງ, ຄຳຊີ້ຂາດ ແລະ ຕັດສິນເປັນຂັ້ນຕົ້ນ ຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເຂດ ຫຼື ພິຈາລະນາພິພາກສາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄະດີທີ່ສານປະຊາຊົນເຂດໄດ້ຕັດສິນແລ້ວ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການປະຊາຊົນ;

2. ທວງເອົາສຳນວນຄະດີທີ່ເຫັນວ່າ ມີຄວາມສຳຄັນ ຫຼື ມີຄວາມຫຍຸ້ງຍາກເປັນພິເສດຈາກສານປະຊາຊົນເຂດມາດຳເນີນ ແລະ ພິຈາລະນາຕັດສິນເປັນຂັ້ນຕົ້ນດ້ວຍຕົນເອງ ຕາມລະບຽບການໂດຍການເຫັນດີຂອງປະທານຄະນະສານ;

3. ສົ່ງສຳນວນຄະດີທີ່ສານປະຊາຊົນເຂດ ໄດ້ຕັດສິນເປັນຂັ້ນຕົ້ນແລ້ວ ຊຶ່ງເຫັນວ່າມີຄວາມຫຍຸ້ງຍາກ ແລະ ສັບສົນ ໃຫ້ສານປະຊາຊົນພາກດຳເນີນ ແລະ ພິຈາລະນາພິພາກສາເປັນຂັ້ນອຸທອນ ແຕ່ຕ້ອງໄດ້ຮັບຄວາມເຫັນດີຈາກປະທານສານປະຊາຊົນພາກນັ້ນ ເສຍກ່ອນ;

4. ແນະນຳທາງດ້ານກົດໝາຍ ແລະ ທາງດ້ານປະເພນີສານຂອງສານປະຊາຊົນສູງສຸດ ໃຫ້ສານປະຊາຊົນເຂດ ເພື່ອຮັບປະກັນຄວາມຖືກຕ້ອງ ແລະ ເປັນເອກະພາບໃນການປະຕິບັດກົດໝາຍ;

5. ຄຸ້ມຄອງທາງດ້ານການຈັດຕັ້ງ, ການເຄື່ອນໄຫວຂອງຕົນ ແລະ ກວດກາທາງດ້ານວິຊາສະເພາະ ຂອງສານປະຊາຊົນເຂດທີ່ຂຶ້ນກັບຕົນ;

6. ຄົ້ນຄວ້າ ສັງລວມການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເກັບກຳສະຖິຕິຄະດີ ເພື່ອລາຍງານໃຫ້ສານຂັ້ນເທິງ;

7. ສົ່ງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ໃຫ້ສານປະຊາຊົນຂັ້ນເທິງ ແລະ ອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ເພື່ອກວດກາ;

8. ສົ່ງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານໃຫ້ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງທີ່ກ່ຽວຂ້ອງ ສຳລັບໂທດຕັດອິດສະລະພາບ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານຍຸຕິທຳ ແລະ ກົດໝາຍຕາມການມອບໝາຍຂອງຂັ້ນເທິງ;

10. ສະຫຼຸບ, ລາຍງານການເຄື່ອນໄຫວ ແລະ ການປະຕິບັດໜ້າທີ່ຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ສຳລັບ ສິດ ແລະ ໜ້າທີ່ຂອງສານເດັກ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີເດັກ.

## ມາດຕາ 26 (ປັບປຸງ) ສານປະຊາຊົນເຂດ

ສານປະຊາຊົນເຂດ ແມ່ນ ສານໜຶ່ງໃນລະບົບສານປະຊາຊົນ, ມີພາລະບົດບາດດຳເນີນການພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ ຄະດີທີ່ຢູ່ໃນຂອບເຂດສິດອຳນາດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງກົດໝາຍສະບັບນີ້.

ສານປະຊາຊົນເຂດ ສ້າງຕັ້ງຂຶ້ນໃນເມືອງ, ເທດສະບານ, ນະຄອນໃດໜຶ່ງ ຫຼື ກວມເອົາຫຼາຍເມືອງ, ເທດສະບານ, ນະຄອນ ມາໂຮມເຂົ້າກັນເປັນເຂດໜຶ່ງ ຕາມສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ, ມີຄະດີເກີດຂຶ້ນຫຼາຍ ຫຼື ອີງຕາມສະພາບພູມສາດ ຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

ເພື່ອອຳນວຍຄວາມສະດວກໃຫ້ປະຊາຊົນເຂົ້າຫາການດຳເນີນຄະດີຢູ່ສານໄດ້ງ່າຍ ສາມາດສ້າງຕັ້ງໜ່ວຍງານຂອງສານປະຊາຊົນເຂດຂຶ້ນຢູ່ເມືອງ, ເທດສະບານ ຫຼື ນະຄອນໃດໜຶ່ງ ຕາມການຕົກລົງຂອງປະທານສານປະຊາຊົນສູງສຸດ.

## ມາດຕາ 27 ສິດ ແລະ ໜ້າທີ່ຂອງສານປະຊາຊົນເຂດ

ສານປະຊາຊົນເຂດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມໃນຄະດີ ເປັນຕົ້ນຕໍ;
2. ພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ:
   - ຄະດີ ທີ່ມີມູນຄ່າ ບໍ່ເກີນ 300,000,000 ກີບ ແລະ ຄະດີກ່ຽວກັບສາຍຜົວເມຍ, ລູກ, ສິນສົມສ້າງ ແລະ ໜີ້ສິນ ຂອງຜົວເມຍ;
   - ຄະດີອາຍາ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດບໍ່ເກີນສາມປີ ຍົກເວັ້ນຄະດີເດັກກະທຳຜິດ;
   - ຄະດີອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ;
3. ຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນ;
4. ຄົ້ນຄວ້າ ສັງລວມການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເກັບກຳສະຖິຕິຄະດີ ເພື່ອລາຍງານໃຫ້ສານຂັ້ນເທິງ;
5. ສົ່ງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ໃຫ້ສານປະຊາຊົນຂັ້ນເທິງ ແລະ ອົງການໄອຍະການປະຊາຊົນເຂດ ເພື່ອກວດກາ;

6. ສົ່ງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສີນ ແລະ ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ໃຫ້ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສີນຂອງສານ ແລະ ສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງທີ່ກ່ຽວຂ້ອງສຳລັບໂທດຕັດອິດສະລະພາບ;

7. ສະຫຼຸບ, ລາຍງານການເຄື່ອນໄຫວ ແລະ ການປະຕິບັດໜ້າທີ່ຂອງຕົນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 28 (ປັບປຸງ) ສານທະຫານ**

ສານທະຫານ ແມ່ນ ອົງການພິພາກສາໜຶ່ງ ໃນລະບົບສານປະຊາຊົນ ແຫ່ງ ສປປ ລາວ ທີ່ສ້າງຕັ້ງຂຶ້ນໃນກອງທັບປະຊາຊົນລາວ, ມີພາລະບົດບາດດຳເນີນການຕັດສີນ ແລະ ພິພາກສາຄະດີອາຍາກ່ຽວກັບການກະທຳຜິດທີ່ເກີດຂຶ້ນ ໃນຂົງເຂດຄວາມຮັບຜິດຊອບວຽກງານຮອບດ້ານຂອງທະຫານ, ໃນກຳລັງປະກອບອາວຸດປ້ອງກັນຊາດ, ຕໍ່ນາຍ ແລະ ພົນທະຫານ, ກຳມະກອນ, ພາລະກອນປ້ອງກັນຊາດ ແລະ ຕໍ່ບຸກຄົນນອກກອງທັບ ໃນຂອບເຂດຍຸດທະສາດການທະຫານ ແລະ ຂອບເຂດຕັ້ງທັບຂອງທະຫານ.

**ມາດຕາ 29 (ປັບປຸງ) ລະບົບ ແລະ ຂັ້ນການຕັດສີນຂອງສານທະຫານ**

ສານທະຫານ ປະກອບດ້ວຍ:

1. ສານທະຫານຂັ້ນສູງ;
2. ສານທະຫານພາກ.

ການພິຈາລະນາຕັດສີນຄະດີອາຍາຂອງສານທະຫານ ມີ ສອງຂັ້ນ ຄື:

- ຂັ້ນຕົ້ນ;
- ຂັ້ນອຸທອນ.

ສານທະຫານພາກ ຕັດສີນເປັນຂັ້ນຕົ້ນ ຕາມຂໍ້ມູນຫຼັກຖານ ແລະ ກົດໝາຍ.

ສານທະຫານຂັ້ນສູງ ພິພາກສາເປັນຂັ້ນອຸທອນ ຕາມຂໍ້ມູນຫຼັກຖານ ແລະ ກົດໝາຍກ່ຽວກັບຄະດີອາຍາທີ່ສານທະຫານພາກໄດ້ຕັດສີນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍໄອຍະການທະຫານ.

ສຳລັບຂັ້ນລົບລ້າງ ແມ່ນ ພິຈາລະນາຢູ່ສານປະຊາຊົນສູງສຸດ.

**ມາດຕາ 30 (ໃໝ່) ສິດ, ໜ້າທີ່ ແລະ ການເຄື່ອນໄຫວວຽກງານຂອງສານທະຫານ**

ສານທະຫານ ມີ ສິດ ແລະ ໜ້າທີ່ໃນການພິຈາລະນາຄະດີ ດັ່ງນີ້:

1. ຄະດີ ທີ່ພົວພັນເຖິງການກະທຳຜິດທາງອາຍາຂອງນາຍ ແລະ ພົນທະຫານ, ກຳມະກອນ ແລະ ພາລະກອນປ້ອງກັນຊາດ;

2. ຄະດີ ທີ່ພົວພັນເຖິງການກະທຳຜິດທາງອາຍາຂອງກຳລັງສຳຮອງ, ກຳລັງປ້ອງກັນຕົວ, ກອງຫຼອນ ແລະ ຂອງບຸກຄົນທີ່ພວມເຮັດໜ້າທີ່ໃນໄລຍະອົບຮົມ, ຫັດແອບ, ກຽມພ້ອມສູ້ຮົບ, ເຄື່ອນໄຫວສູ້ຮົບ ຫຼື ລາດຕະເວນ ຊຶ່ງກອງທັບເປັນຜູ້ຄຸ້ມຄອງໂດຍກົງ;

3. ຄະດີ ທີ່ພົວພັນເຖິງການກະທຳຜິດທາງອາຍາຂອງບຸກຄົນນອກກອງທັບ ທີ່ກໍ່ຄວາມເສຍຫາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມລັບທາງການທະຫານ ແລະ ຕໍ່ຜົນປະໂຫຍດຂອງກອງທັບ, ຊີວິດ, ຊັບສິນ, ສຸຂະພາບ ຫຼື ກຽດສັກສີຂອງນາຍ ແລະ ພົນທະຫານ.

ລະບົບການຈັດຕັ້ງ, ສິດ, ໜ້າທີ່ ແລະ ການເຄື່ອນໄຫວວຽກງານລະອຽດຂອງສານທະຫານ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສານທະຫານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 31 ໂຄງປະກອບການຈັດຕັ້ງ

ເພື່ອຮັບປະກັນການປະຕິບັດໜ້າທີ່ ແລະ ການເຄື່ອນໄຫວວຽກງານຂອງຕົນ ສານປະຊາຊົນມີກົງຈັກ ດັ່ງນີ້:

ສານປະຊາຊົນສູງສຸດ ມີ ສະພາຜູ້ພິພາກສາ, ບັນດາຄະນະສານ ແລະ ກົງຈັກບໍລິຫານ.

ສານປະຊາຊົນພາກ ມີ ຄະນະປະທານ, ບັນດາຄະນະສານ ແລະ ກົງຈັກບໍລິຫານ.

ສານປະຊາຊົນແຂວງ, ນະຄອນຫຼວງ ມີ ຄະນະປະທານ, ບັນດາຄະນະສານ ແລະ ກົງຈັກບໍລິຫານ.

ສານປະຊາຊົນເຂດ ມີ ຄະນະປະທານ, ບັນດາຄະນະສານ ແລະ ກົງຈັກບໍລິຫານ.

ສຳລັບໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງສານເດັກ ໄດ້ກຳນົດໄວ້ໃນນິຕິກຳຕ່າງຫາກ.

### ມາດຕາ 32 (ປັບປຸງ) ສະພາຜູ້ພິພາກສາ

ສະພາຜູ້ພິພາກສາ ແມ່ນ ຄະນະນຳຂອງສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ ປະທານ, ບັນດາຮອງປະທານ, ບັນດາຫົວໜ້າຄະນະສານ ແລະ ຜູ້ພິພາກສາຈຳນວນໜຶ່ງ ຂອງສານປະຊາຊົນສູງສຸດ ໂດຍແມ່ນສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຈຳນວນສະມາຊິກສະພາຜູ້ພິພາກສາ ບໍ່ໃຫ້ເກີນສິບຫ້າຄົນ.

ສະພາຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຮ່າງກົດໝາຍ ແລະ ຮ່າງນິຕິກຳອື່ນຂອງສານປະຊາຊົນ;

2. ຄົ້ນຄວ້າ ຮ່າງຄຳແນະນຳຂອງສານປະຊາຊົນສູງສຸດກ່ຽວກັບການປະຕິບັດກົດໝາຍ ແລະ ການດຳເນີນຄະດີຂອງສານປະຊາຊົນ ໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວປະເທດ;

3. ຄົ້ນຄວ້າ ຮ່າງຄຳແນະນຳທາງດ້ານປະເພນີສານຂອງສານປະຊາຊົນສູງສຸດ;

4. ຄົ້ນຄວ້າ ຄຳຕັດສິນປະຫານຊີວິດ ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ເພື່ອສະເໜີໃຫ້ປະທານສານປະຊາຊົນສູງສຸດ ອອກຄຳຊີ້ຂາດ;

5. ຄົ້ນຄວ້າ ຄຳສະເໜີຣື້ຟື້ນຄະດີຂອງໄອຍະການປະຊາຊົນສູງສຸດ;

6. ຄົ້ນຄວ້າ ການແຕ່ງຕັ້ງ ຫຼື ປົດຕຳແໜ່ງຮອງປະທານສານປະຊາຊົນສູງສຸດ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ສະເໜີຕໍ່ປະທານປະເທດ ພິຈາລະນາ;

7. ຄົ້ນຄວ້າ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ ແລະ ຜູ້ພິພາກສາຂອງສານປະຊາຊົນ ເພື່ອໃຫ້ປະທານສານປະຊາຊົນສູງສຸດ ສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;

8. ກະກຽມເນື້ອໃນ ແລະ ຮູບການກອງປະຊຸມໃຫຍ່ຜູ້ພິພາກສາ;

9. ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການເຄື່ອນໄຫວວຽກງານຂອງສານ ເປັນຕົ້ນ ການດຳເນີນຄະດີ;

10. ຄົ້ນຄວ້າຮ່າງບົດລາຍງານຂອງປະທານສານປະຊາຊົນສູງສຸດ ກ່ຽວກັບກັບການເຄື່ອນໄຫວວຽກງານຂອງສານ ເພື່ອນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກອງປະຊຸມສະພາຜູ້ພິພາກສາ ເປີດຂຶ້ນຢ່າງໜ້ອຍສາມເດືອນຕໍ່ເທື່ອ.

ກອງປະຊຸມສະພາຜູ້ພິພາກສາ ຈະດຳເນີນໄດ້ກໍຕໍ່ເມື່ອຫາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນສະມາຊິກສະພາຜູ້ພິພາກສາທັງໝົດ.

ມະຕິຂອງກອງປະຊຸມສະພາຜູ້ພິພາກສາ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 33 (ປັບປຸງ) ຄະນະປະທານຂອງສານປະຊາຊົນທ້ອງຖິ່ນ**

ຄະນະປະທານສານປະຊາຊົນທ້ອງຖິ່ນ ແມ່ນ ຄະນະນຳຂອງສານປະຊາຊົນດັ່ງກ່າວ ຊຶ່ງປະກອບດ້ວຍ ປະທານ, ບັນດາຮອງປະທານ, ຫົວໜ້າຄະນະສານ ແລະ ຜູ້ພິພາກສາ ຈຳນວນໜຶ່ງ.

ຄະນະປະທານຂອງສານປະຊາຊົນທ້ອງຖິ່ນ ຖືກແຕ່ງຕັ້ງ ແລະ ປົດຕຳແໜ່ງ ໂດຍປະທານສານປະຊາຊົນສູງສຸດ ຕາມການສະເໜີຂອງປະທານສານປະຊາຊົນທີ່ກ່ຽວຂ້ອງ.

ຄະນະປະທານຂອງສານປະຊາຊົນທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າບັນຫາສຳຄັນ ເປັນຕົ້ນ ຄະດີປະຫານຊີວິດ ແລະ ຄະດີອື່ນ ທີ່ມີຄວາມສຳຄັນ ຊຶ່ງຢູ່ໃນສິດອຳນາດຂອງຕົນ;

2. ສະຫຼຸບ ຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການເຄື່ອນໄຫວວຽກງານຂອງສານ ເປັນຕົ້ນ ການດຳເນີນຄະດີ;

3. ຄົ້ນຄວ້າເອກະສານ ທີ່ຈະນຳສະເໜີຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ສານປະຊາຊົນສູງສຸດ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 34 (ປັບປຸງ) ຄະນະສານຂອງສານປະຊາຊົນ**

ຄະນະສານຂອງ ສານປະຊາຊົນສູງສຸດ, ສານປະຊາຊົນພາກ ແລະ ແຂວງ, ນະຄອນຫຼວງ ປະກອບດ້ວຍ ຄະນະສານອາຍາ, ຄະນະສານແພ່ງ, ຄະນະສານການຄ້າ, ຄະນະສານຄອບຄົວ, ຄະນະສານເດັກ, ຄະນະສານແຮງງານ, ຄະນະສານປົກຄອງ ແລະ ຄະນະສານອື່ນ.

ຄະນະສານຂອງສານປະຊາຊົນເຂດ ປະກອບດ້ວຍ ຄະນະສານອາຍາ, ຄະນະສານແພ່ງ, ຄະນະສານຄອບຄົວ, ຄະນະສານແຮງງານ ແລະ ຄະນະສານອື່ນ.

ແຕ່ລະຄະນະສານຂອງສານປະຊາຊົນ ມີ ຫົວໜ້າຄະນະສານ, ຮອງຫົວໜ້າຄະນະສານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ແລະ ພະນັກງານວິຊາການ.

ຄະນະສານຂອງສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂໍ້ 1, 2, 5 ແລະ 14 ຂອງກົດໝາຍສະບັບນີ້.

ຄະນະສານຂອງສານປະຊາຊົນພາກ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂໍ້ 1, 2, 3 ແລະ 10 ຂອງກົດໝາຍສະບັບນີ້.

ຄະນະສານຂອງສານປະຊາຊົນ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂໍ້ 1, 2, 3, 4 ແລະ 11 ຂອງກົດໝາຍສະບັບນີ້.

ຄະນະສານຂອງສານປະຊາຊົນເຂດ ມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂໍ້ 1, 2 ແລະ 8 ຂອງກົດໝາຍສະບັບນີ້.

**ມາດຕາ 35 (ປັບປຸງ) ກົງຈັກບໍລິຫານ**

ເພື່ອຮັບປະກັນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ ສານປະຊາຊົນແຕ່ລະຂັ້ນ ມີ ກົງຈັກບໍລິຫານ ດັ່ງນີ້:

ສານປະຊາຊົນສູງສຸດ ມີ ຫ້ອງການ, ກົມ ແລະ ສະຖາບັນ.

ສານປະຊາຊົນພາກ ມີ ຫ້ອງການ, ພະແນກ ແລະ ຂະແໜງ.

ສານປະຊາຊົນ ແຂວງ, ນະຄອນຫຼວງ ແລະ ສານເດັກ ມີ ຫ້ອງການ, ຂະແໜງ.

ສານປະຊາຊົນເຂດ ມີ ຫ້ອງການ ແລະ ໜ່ວຍງານ.

ໃນກໍລະນີທີ່ຈຳເປັນ, ອີງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະອາດຈະສ້າງຕັ້ງກົມ ແລະ ກົງຈັກບໍລິຫານອື່ນ ຂຶ້ນກໍໄດ້.

ໂຄງປະກອບການຈັດຕັ້ງ, ຈຳນວນພົນ ແລະ ການເຄື່ອນໄຫວວຽກງານຂອງກົງຈັກບໍລິຫານ ໄດ້ກຳນົດໄວ້ໃນລະບຽບພາຍໃນຂອງສານປະຊາຊົນແຕ່ລະຂັ້ນ.

**ມາດຕາ 36 ໂຄງປະກອບບຸກຄະລາກອນຂອງສານປະຊາຊົນ**

ສານປະຊາຊົນທຸກຂັ້ນ ປະກອບດ້ວຍ ປະທານ, ບັນດາຮອງປະທານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ, ພະນັກງານວິຊາການ ແລະ ພະນັກງານບໍລິຫານ.

**ມາດຕາ 37 (ປັບປຸງ) ການເລືອກຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ**

ປະທານສານປະຊາຊົນສູງສຸດ ຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍສະພາແຫ່ງຊາດ ຕາມການສະເໜີຂອງປະທານປະເທດ ແລະ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ຮອງປະທານສານປະຊາຊົນສູງສຸດ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍປະທານປະເທດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ຜູ້ພິພາກສາ, ຫົວໜ້າຄະນະສານ, ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນ ຂອງສານປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີ ຂອງປະທານສານປະຊາຊົນສູງສຸດ.

ປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງທີ່ສະພາປະຊາຊົນຂັ້ນແຂວງບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່ ພິຈາລະນາຮັບຮອງເອົາ.

ຮອງປະທານສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ແລະ ຜູ້ພິພາກສາຂອງສານປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຄະນະປະຈຳສະພາແຫ່ງຊາດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ ພາຍຫຼັງທີ່ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ບ່ອນທີ່ສານປະຊາຊົນນັ້ນຕັ້ງຢູ່ພິຈາລະນາຮັບຮອງເອົາ.

**ມາດຕາ 38 (ປັບປຸງ) ສິດ ແລະ ໜ້າທີ່ຂອງປະທານສານປະຊາຊົນສູງສຸດ**

ປະທານສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນັ່ງເປັນປະທານໃນທຸກຄະນະສານຕັດສິນຂອງສານປະຊາຊົນສູງສຸດ;
2. ຊີ້ນຳ ນຳພາວຽກງານຂອງສານປະຊາຊົນສູງສຸດ, ສະພາຜູ້ພິພາກສາ, ກອງປະຊຸມໃຫຍ່ຜູ້ພິພາກສາ ແລະ ຮຽກໂຮມກອງປະຊຸມສະພາຜູ້ພິພາກສາ ແລະ ກອງປະຊຸມໃຫຍ່ຜູ້ພິພາກສາ;
3. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນ ແລະ ສານທະຫານຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດ ບໍ່ໄດ້ເປີດປະຊຸມ;
4. ສະເໜີໃຫ້ປະທານປະເທດ ແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງປະທານສານປະຊາຊົນສູງສຸດ;
5. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ສະມະຊິກສະພາຜູ້ພິພາກສາຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາຮັບຮອງ;
6. ກຳນົດຈຳນວນຜູ້ພິພາກສາຂອງສານປະຊາຊົນທຸກຂັ້ນ ແລະ ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ ແລະ ຜູ້ພິພາກສາຂອງສານປະຊາຊົນ ເພື່ອໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ;
7. ກຳນົດຂອບເຂດຄວາມຮັບຜິດຊອບ ແລະ ສະຖານທີ່ຕັ້ງຂອງສານປະຊາຊົນເຂດ;
8. ອອກຄຳແນະນຳ, ບົດອະທິບາຍກົດໝາຍ ແລະ ການດຳເນີນຄະດີ ທີ່ຢູ່ໃນຄວາມຮັບຜິດຊອບຂອງສານປະຊາຊົນ ເພື່ອໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;

9. ອອກຄຳຊີ້ຂາດກ່ຽວກັບຄຳຕັດສິນປະຫານຊີວິດ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

10. ອອກຄຳຊີ້ຂາດກ່ຽວກັບສິດອຳນາດຂອງສານໃນທົ່ວປະເທດ;

11. ຊີ້ນຳວຽກງານຄົ້ນຄວ້າ ແລະ ສະເໜີຮ່າງກົດໝາຍ, ນິຕິກຳອື່ນ ແລະ ສະເໜີຄະນະປະຈຳສະພາແຫ່ງຊາດ ຕີຄວາມໝາຍກົດໝາຍ;

12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າຄະນະສານ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນ, ຫົວໜ້າ, ຮອງຫົວໜ້າພະແນກ, ຂະແໜງ, ໜ່ວຍງານ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ຂອງສານປະຊາຊົນ;

13. ກຳນົດກົງຈັກບໍລິຫານຂອງສານປະຊາຊົນສູງສຸດ ແລະ ສານປະຊາຊົນທ້ອງຖິ່ນ ເພື່ອນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາອະນຸຍາດ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 39 (ປັບປຸງ) ຮອງປະທານສານປະຊາຊົນສູງສຸດ

ຮອງປະທານສານປະຊາຊົນສູງສຸດ ມີສິດນັ່ງເປັນປະທານ ໃນທຸກຄະນະສານຕັດສິນຂອງສານປະຊາຊົນສູງສຸດ.

ຮອງປະທານສານປະຊາຊົນສູງສຸດ ມີໜ້າທີ່ຊ່ວຍປະທານສານປະຊາຊົນສູງສຸດ ໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານປະຊາຊົນສູງສຸດ.

ຮອງປະທານສານປະຊາຊົນສູງສຸດຜູ້ໜຶ່ງ ເປັນປະທານສານທະຫານຂັ້ນສູງໂດຍຕຳແໜ່ງ.

ໃນກໍລະນີທີ່ປະທານສານປະຊາຊົນສູງສຸດຕິດຂັດ, ຮອງປະທານສານປະຊາຊົນສູງສຸດ ຜູ້ທີ່ໄດ້ຮັບມອບໝາຍເປັນຜູ້ຮັກສາການແທນ.

### ມາດຕາ 40 (ປັບປຸງ) ສິດ ແລະ ໜ້າທີ່ຂອງປະທານສານປະຊາຊົນທ້ອງຖິ່ນ

ປະທານສານປະຊາຊົນທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນັ່ງເປັນປະທານໃນທຸກຄະນະສານຕັດສິນຢູ່ສານປະຊາຊົນຂັ້ນຂອງຕົນ;
2. ຊີ້ນຳ ນຳພາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນຂັ້ນຂອງຕົນ;
3. ໄດ້ຮັບການບຳລຸງ, ຍົກລະດັບກ່ຽວກັບວຽກງານ ບໍລິຫານ ແລະ ວິຊາສະເພາະ;
4. ລາຍງານສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສານປະຊາຊົນຂັ້ນຂອງຕົນ ຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາ, ສານປະຊາຊົນສູງສຸດ ແລະ ສານປະຊາຊົນຂັ້ນເທິງຖັດຕົນ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 41 (ປັບປຸງ) ຮອງປະທານສານປະຊາຊົນທ້ອງຖິ່ນ

ຮອງປະທານສານປະຊາຊົນທ້ອງຖິ່ນ ມີສິດນັ່ງເປັນປະທານໃນທຸກຄະນະສານຕັດສິນຂອງສານປະຊາຊົນຂັ້ນຂອງຕົນ.

ຮອງປະທານສານປະຊາຊົນທ້ອງຖິ່ນ ມີໜ້າທີ່ຊ່ວຍປະທານສານປະຊາຊົນຂັ້ນຂອງຕົນໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບໝາຍຂອງປະທານສານປະຊາຊົນຂັ້ນຂອງຕົນ.

ໃນກໍລະນີທີ່ປະທານສານປະຊາຊົນທ້ອງຖິ່ນຕິດຂັດ ແມ່ນຮອງປະທານສານປະຊາຊົນ ຜູ້ທີ່ໄດ້ຮັບມອບໝາຍເປັນຜູ້ຮັກສາການແທນ.

**ມາດຕາ 42 (ປັບປຸງ) ສິດ ແລະ ໜ້າທີ່ຂອງຜູ້ພິພາກສາ**

ຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈົງຮັກພັກດີ, ສັດຊື່ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ;
2. ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;
3. ຄົ້ນຄວ້າສຳນວນຄະດີທີ່ໄດ້ຮັບມອບໝາຍ;
4. ເອົາຄຳໃຫ້ການຂອງໂຈດ, ຈຳເລີຍ ແລະ ບຸກຄົນອື່ນທີ່ເຂົ້າຮ່ວມໃນການດຳເນີນຄະດີ;
5. ເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ;
6. ໄກ່ເກ່ຍຄູ່ຄວາມໃນຄະດີ;
7. ນັ່ງເປັນຄະນະສານຕັດສິນຄະດີ;
8. ໄດ້ຮັບການບຳລຸງ, ຍົກລະດັບກ່ຽວກັບວຽກງານຜູ້ພິພາກສາ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 ສິດ ແລະ ໜ້າທີ່ຂອງຜູ້ຊ່ວຍຜູ້ພິພາກສາ**

ຜູ້ຊ່ວຍຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍຜູ້ພິພາກສາໃນການຄົ້ນຄວ້າສຳນວນຄະດີ;
2. ຊ່ວຍຜູ້ພິພາກສາໃນການເອົາຄຳໃຫ້ການຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
3. ເຂົ້າຮ່ວມໃນການໄກ່ເກ່ຍຄູ່ຄວາມໃນຄະດີ;
4. ສະຫຼຸບ ລາຍງານ ຄະດີທີ່ຕົນຮັບຜິດຊອບຄົ້ນຄວ້າ ຕໍ່ຜູ້ພິພາກສາ;
5. ຊ່ວຍຜູ້ພິພາກສາ ໃນການຂຽນຄຳຕັດສິນ ແລະ ຄຳພິພາກສາຂອງສານ;
6. ໄດ້ຮັບການບຳລຸງ, ຍົກລະດັບກ່ຽວກັບວຽກງານຜູ້ຊ່ວຍຜູ້ພິພາກສາ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

ມາດຕະຖານຂອງຜູ້ຊ່ວຍຜູ້ພິພາກສາ ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 44 (ປັບປຸງ) ສິດ ແລະ ໜ້າທີ່ຂອງຈ່າສານ**

ຈ່າສານ ແມ່ນ ພະນັກງານວິຊາການ ທີ່ມີເງື່ອນໄຂ, ມາດຕະຖານ ແລະ ໄດ້ຮັບການແຕ່ງຕັ້ງຈາກປະທານສານປະຊາຊົນສູງສຸດ.

ຈ່າສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ແລະ ກວດກາຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງ, ປະກອບສຳນວນ, ຂຶ້ນຟ້ອງ, ເຮັດບັນຊີຄະດີ, ຈັດລຽງເອກະສານໃນສຳນວນຄະດີ;

2. ອອກໝາຍຮຽກ, ໝາຍເຊີນ ຕາມການແນະນຳຂອງຜູ້ພິພາກສາ;

3. ຄົ້ນຄວ້າ ອອກໃບແຈ້ງໂທດເລກທີ 3.

4. ເຂົ້າຮ່ວມບັນທຶກໃນການເອົາຄຳໃຫ້ການ ແລະ ໃນການໄກ່ເກ່ຍ;

5. ກະກຽມ, ແຈ້ງລະບຽບການ ແລະ ບັນທຶກປຶ້ມປະຊຸມສານໃນທີ່ປະຊຸມສານ;

6. ອະທິບາຍ, ຊີ້ແຈງເຫດຜົນ ໃຫ້ຄູ່ຄວາມໃນຄະດີເຂົ້າໃຈກ່ຽວກັບການຕັດສິນ ຫຼື ພິພາກສາຄະດີຂອງສານ ພ້ອມທັງແຈ້ງສິດ ໃນການຂໍອຸທອນ ຫຼື ຂໍລົບລ້າງ;

7. ເຊັນຢັ້ງຢືນຄຳຕັດສິນ ຫຼື ຄຳພິພາກສາ ແລະ ເອກະສານອື່ນ ຕາມລະບຽບ, ກົດໝາຍ;

8. ເຮັດບັນຊີ, ເກັບມ້ຽນຂອງກາງຄະດີ ແລະ ຄຸ້ມຄອງເງິນຄ່າທຳນຽມສານຕາມກົດໝາຍ, ສະຫຼຸບສະຖິຕິຄະດີ, ສົ່ງຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ສານປະຊາຊົນຂັ້ນເທິງ ແລະ ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ ເພື່ອກວດກາ;

9. ໄດ້ຮັບການບຳລຸງ, ຍົກລະດັບກ່ຽວກັບວຽກງານຈ່າສານ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

ມາດຕະຖານຂອງຈ່າສານ ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 45 (ໃໝ່) ພະນັກງານວິຊາການ

ພະນັກງານວິຊາການ ແມ່ນ ຜູ້ທີ່ຜ່ານວິຊາຊີບກົດໝາຍ ເຂົ້າມາເຮັດວຽກຢູ່ຄະນະສານໃດໜຶ່ງຂອງສານປະຊາຊົນ.

ພະນັກງານວິຊາການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍວຽກຈ່າສານ ໃນການດຳເນີນຄະດີ;

2. ເຂົ້າຮ່ວມໃນການດຳເນີນຄະດີ ແລະ ບັນທຶກຄຳໃຫ້ການ;

3. ຊ່ວຍວຽກຈ່າສານໃນການປະຊຸມສານ;

4. ເຂົ້າຮ່ວມໃນການເກັບກຳຂໍ້ມູນຫຼັກຖານ, ການໄກ່ເກ່ຍ ແລະ ເຮັດບົດບັນທຶກຕ່າງໆ;

5. ລົງລາຍເຊັນໃນບົດບັນທຶກຄຳໃຫ້ການ, ເອກະສານອື່ນຕາມໜ້າທີ່ ຫຼື ຕາມການມອບໝາຍ;

6. ໄດ້ຮັບການບຳລຸງຍົກລະດັບຄວາມຮູ້ ຄວາມສາມາດ ທາງດ້ານວິຊາສະເພາະ, ວິຊາການ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

### ມາດຕາ 46 (ໃໝ່) ພະນັກງານບໍລິຫານ

ພະນັກງານບໍລິຫານ ແມ່ນ ພະນັກງານທີ່ເຮັດວຽກກ່ຽວກັບການບໍລິຫານສານ ຕາມຫຼັກວິຊາສະເພາະໃນແຕ່ລະກົງຈັກບໍລິຫານ.

ສິດ ແລະ ໜ້າທີ່ຂອງພະນັກງານບໍລິຫານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

# ພາກທີ IV
# ຜູ້ພິພາກສາ

## ໝວດທີ 1
## ມາດຕະຖານ, ຊັ້ນ, ຂັ້ນ ແລະ ການປົກປ້ອງຜູ້ພິພາກສາ

### ມາດຕາ 47 ຜູ້ພິພາກສາ

ຜູ້ພິພາກສາ ແມ່ນ ຜູ້ທີ່ມີມາດຕະຖານ ແລະ ໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດ ໃຫ້ມີສິດພິຈາລະນາຕັດສິນຄະດີ.

ມີແຕ່ຜູ້ພິພາກສາທີ່ໄດ້ຮັບການແຕ່ງຕັ້ງຕາມກົດໝາຍເທົ່ານັ້ນ ຈຶ່ງສາມາດປະກອບເຂົ້າເປັນຄະນະສານຕັດສິນ.

### ມາດຕາ 48 (ປັບປຸງ) ມາດຕະຖານຂອງຜູ້ພິພາກສາ

ຜູ້ພິພາກສາຂອງສານປະຊາຊົນ ຕ້ອງມີມາດຕະຖານລວມ ດັ່ງນີ້:

1. ເປັນພົນລະເມືອງລາວໂດຍກຳເນີດ ທີ່ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ;
2. ເປັນຜູ້ມີຄຸນທາດການເມືອງໜັກແໜ້ນ;
3. ເປັນຜູ້ມີຄຸນສົມບັດ ສິນທຳປະຕິວັດ, ມີຈັນຍາທຳດີ, ມີຄວາມສັດຊື່ ບໍລິສຸດຕໍ່ການປະຕິບັດໜ້າທີ່ຂອງຕົນ;
4. ເປັນຜູ້ມີລະດັບການສຶກສາດ້ານກົດໝາຍ ແຕ່ຊັ້ນສູງຂຶ້ນໄປ ແລະ ໄດ້ຜ່ານການຝຶກອົບຮົມຕາມຫຼັກສູດສຳລັບຜູ້ພິພາກສາ;
5. ມີສຸຂະພາບດີ.

ສຳລັບມາດຕະຖານລະອຽດຂອງຜູ້ພິພາກສາ ທີ່ບັນຈຸເຂົ້າໃນສານປະຊາຊົນແຕ່ລະຂັ້ນກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 49 (ໃໝ່) ມາດຕະຖານຂອງຜູ້ພິພາກສາສານປະຊາຊົນສູງສຸດ

ຜູ້ພິພາກສາສານປະຊາຊົນສູງສຸດ ນອກຈາກມີມາດຕະຖານລວມແລ້ວ ຍັງຕ້ອງມີມາດຕະຖານສະເພາະ ດັ່ງນີ້:

1. ມີຄຸນທາດການເມືອງ, ຄຸນສົມບັດ ສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳໜັກແໜ້ນ;
2. ມີອາຍຸ ສີ່ສິບປີ ຂຶ້ນໄປ;
3. ເຄີຍດຳລົງຕຳແໜ່ງຂັ້ນຄຸ້ມຄອງ ນຳພາຢູ່ສານປະຊາຊົນໃດໜຶ່ງ;
4. ບໍ່ເຄີຍຖືກລົງວິໄນ ແລະ ຖືກໂທດທາງອາຍາ;

5. ມີສຸຂະພາບດີ.

**ມາດຕາ 50 ຊັ້ນ, ຂັ້ນ ຂອງຜູ້ພິພາກສາ**

ຜູ້ພິພາກສາ ມີ ຊັ້ນ ແລະ ຂັ້ນຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 51 ການປົກປ້ອງຜູ້ພິພາກສາ**

ຜູ້ພິພາກສາ ຈະຖືກຈັບຕົວ ຫຼື ດຳເນີນຄະດີໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄວາມເຫັນດີຈາກຄະນະປະຈຳສະພາແຫ່ງຊາດ ເສຍກ່ອນ.

ໃນກໍລະນີທີ່ໄດ້ຈັບຕົວຜູ້ພິພາກສາ ໃນການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນ ຕ້ອງລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດໃນທັນທີ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ.

ນອກຈາກນີ້ ການຈັບຕົວຜູ້ພິພາກສາຂອງ ສານປະຊາຊົນພາກ, ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານເດັກ ແລະ ສານປະຊາຊົນເຂດນັ້ນ ຕ້ອງລາຍງານໃຫ້ປະທານສານປະຊາຊົນສູງສຸດຊາບນຳ.

ສຳລັບການຈັບຕົວຜູ້ພິພາກສາຂອງສານທະຫານນັ້ນ ຕ້ອງລາຍງານໃຫ້ປະທານສານປະຊາຊົນສູງສຸດ ແລະ ລັດຖະມົນຕີກະຊວງປ້ອງກັນປະເທດ ຊາບນຳ.

## ໝວດທີ 2
## ກອງປະຊຸມໃຫຍ່ຜູ້ພິພາກສາ

**ມາດຕາ 52 ທີ່ຕັ້ງ ແລະ ພາລະບົດບາດຂອງກອງປະຊຸມໃຫຍ່ຜູ້ພິພາກສາ**

ກອງປະຊຸມໃຫຍ່ຜູ້ພິພາກສາ ແມ່ນ ການຈັດຕັ້ງສູງສຸດຂອງອົງການຕັດສິນ ແລະ ພິພາກສາ, ມີພາລະບົດບາດ ຊີ້ນຳບັນດາສານປະຊາຊົນໃນການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນທົ່ວປະເທດ.

ກອງປະຊຸມໃຫຍ່ຜູ້ພິພາກສາ ປະກອບດ້ວຍ ປະທານສານປະຊາຊົນສູງສຸດ ເປັນປະທານ, ບັນດາຮອງປະທານ ແລະ ຜູ້ພິພາກສາທັງໝົດຂອງສານປະຊາຊົນສູງສຸດ, ບັນດາປະທານ, ຮອງປະທານ, ຫົວໜ້າຄະນະສານຂອງສານປະຊາຊົນພາກ, ປະທານ, ຮອງປະທານສານປະຊາຊົນ ແຂວງ, ນະຄອນຫຼວງ, ສານເດັກ, ປະທານສານປະຊາຊົນເຂດ, ປະທານ ສານທະຫານຂັ້ນສູງ ແລະ ສານທະຫານພາກ. ນອກຈາກນີ້ ກໍຈະເຊີນຄະນະນຳຂອງຂະແໜງການອື່ນທີ່ກ່ຽວຂ້ອງເຂົ້າຮ່ວມນຳ. ບຸກຄົນທີ່ຖືກເຊີນເຂົ້າຮ່ວມນັ້ນ ມີສິດສະເໜີຄວາມຄິດຄວາມເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

**ມາດຕາ 53 ສິດ ແລະ ໜ້າທີ່ຂອງກອງປະຊຸມໃຫຍ່ຜູ້ພິພາກສາ**

ກອງປະຊຸມໃຫຍ່ຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງບົດລາຍງານຂອງສະພາຜູ້ພິພາກສາ ແລະ ຄະນະສານຂອງສານປະຊາຊົນສູງສຸດ, ຂອງປະທານ ສານປະຊາຊົນພາກ, ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານເດັກ, ສານປະ

ຊາຊົນເຂດ ແລະ ສານທະຫານຂັ້ນສູງ ກ່ຽວກັບການປະຕິບັດວຽກງານ ຂອງສານ ແລະ ທິດທາງວຽກງານໃນຕໍ່ໜ້າ;

2. ຕີລາຄາສັງລວມສະຖິຕິສານ, ການປະຕິບັດວຽກງານ ແລະ ການນຳໃຊ້ກົດໝາຍຂອງສານ;

3. ກວດກາຄືນ ຄຳຕັດສິນຂອງສານປະຊາຊົນທຸກຂັ້ນ ແລະ ສານທະຫານ ທີ່ມີຂໍ້ຜິດພາດເພື່ອແນະນຳໃຫ້ສານທີ່ມີສິດອຳນາດກ່ຽວຂ້ອງແກ້ໄຂ;

4. ກຳນົດທິດທາງການປັບປຸງການຈັດຕັ້ງສານປະຊາຊົນ;

5. ອອກມະຕິ ກ່ຽວກັບການຈັດຕັ້ງສານ ແລະ ການປະຕິບັດກົດໝາຍຂອງສານ;

6. ພິຈາລະນາບັນຫາອື່ນທີ່ສຳຄັນ ຊຶ່ງພົວພັນກັບວຽກງານຂອງສານ.

**ມາດຕາ 54 ການຮຽກໂຮມກອງປະຊຸມໃຫຍ່ຜູ້ພິພາກສາ**

ກອງປະຊຸມໃຫຍ່ຜູ້ພິພາກສາ ເປີດຂຶ້ນຢ່າງໜ້ອຍ ສອງປີຕໍ່ເທື່ອ ໂດຍການຮຽກໂຮມຂອງປະທານສານປະຊາຊົນສູງສຸດ.

ກອງປະຊຸມໃຫຍ່ຜູ້ພິພາກສາ ຈະດຳເນີນໄດ້ກໍຕໍ່ເມື່ອຫາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ.

ມະຕິຂອງກອງປະຊຸມໃຫຍ່ຜູ້ພິພາກສາ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍ ກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

## ພາກທີ V
## ລະບອບ ວິທີເຮັດວຽກ

**ມາດຕາ 55 ລະບອບເຮັດວຽກ**

ສານປະຊາຊົນທຸກຂັ້ນ ປະກອບເປັນລະບົບສານປະຊາຊົນ ໂດຍແມ່ນສານປະຊາຊົນສູງສຸດຄຸ້ມຄອງທາງດ້ານການຈັດຕັ້ງ ແລະ ບໍລິຫານຂອງສານປະຊາຊົນທ້ອງຖິ່ນ; ຊີ້ນຳການເຄື່ອນໄຫວປະຕິບັດໜ້າທີ່ ແລະ ກວດກາທາງດ້ານວິຊາສະເພາະ ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ.

ການເຮັດວຽກຂອງສານປະຊາຊົນ ຕ້ອງດຳເນີນບົນພື້ນຖານການເຄົາລົບຄວາມເປັນເອກະລາດຂອງຜູ້ພິພາກສາ ໂດຍປະສານສົມທົບກັບຫຼັກການເຮັດວຽກເປັນໝູ່ຄະນະ, ສອດຄ່ອງກັບກົດໝາຍ ເພື່ອຮັບປະກັນການຕັດສິນ ແລະ ພິພາກສາຄະດີ ໃຫ້ມີຄວາມຖືກຕ້ອງ ແລະ ຍຸຕິທຳ.

ສານປະຊາຊົນຂັ້ນເທິງ ກວດກາສານປະຊາຊົນຂັ້ນລຸ່ມ ໃນການຕັດສິນ ແລະ ພິພາກສາຄະດີ.

**ມາດຕາ 56 ວິທີເຮັດວຽກ**

ສານປະຊາຊົນ ປະຕິບັດໜ້າທີ່ວຽກງານ ເປັນໝູ່ຄະນະ ໂດຍມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຄະນະສານ, ກົງຈັກບໍລິຫານ ແລະ ບຸກຄົນ, ເຮັດວຽກຢ່າງມີແຜນການ, ກວດກາ,

ສະຫຼຸບ, ປະເມີນຜົນ, ຖອດຖອນບົດຮຽນ, ລາຍງານ, ຂໍຄໍາເຫັນຊີ້ນໍາຈາກຂັ້ນເທິງຂອງຕົນ ແລະ ມີການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 57 ການເຂົ້າຮ່ວມ ແລະ ການຕິດຕາມກວດກາຂອງໄອຍະການປະຊາຊົນໃນການດໍາເນີນຄະດີຂອງສານປະຊາຊົນ**

ໄອຍະການປະຊາຊົນ ເຂົ້າຮ່ວມໃນການດໍາເນີນຄະດີ ຢູ່ທີ່ປະຊຸມສານ ແລະ ຕິດຕາມກວດກາການປະຕິບັດກົດໝາຍຂອງສານປະຊາຊົນ ຕາມລະບຽບການ ແລະ ໃນຂອບເຂດທີ່ກົດໝາຍໄດ້ກໍານົດໄວ້.

**ມາດຕາ 58 ການເຂົ້າຮ່ວມຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ໃນການດໍາເນີນຄະດີຂອງສານປະຊາຊົນ**

ຜູ້ຕາງໜ້າຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ທີ່ກ່ຽວຂ້ອງໃນຄະດີ ເຂົ້າຮ່ວມໃນການດໍາເນີນຄະດີ ຕາມການສະເໜີຂອງສານປະຊາຊົນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຄູ່ຄວາມ ຫຼື ບຸກຄົນທີ່ຢູ່ໃນການຄຸ້ມຄອງຂອງຕົນ ດ້ວຍການຊີ້ແຈງ, ໃຫ້ຂໍ້ມູນ, ອະທິບາຍ ແລະ ໃຫ້ເຫດຜົນກ່ຽວກັບຄະດີທີ່ກ່ຽວຂ້ອງ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 59 ຂໍ້ຫ້າມສໍາລັບພະນັກງານສານປະຊາຊົນ**

ຫ້າມ ພະນັກງານສານປະຊາຊົນ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕໍາແໜ່ງ, ສິດອໍານາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ບັງຄັບ ນາບຂູ່, ນໍາໃຊ້ສິດ, ປະຕິບັດໜ້າທີ່ເກີນຂອບເຂດ ຫຼື ລະເມີດລະບຽບກ່ຽວກັບການດໍາເນີນຄະດີ;
3. ລໍາອຽງ ຫຼື ເຂົ້າຂ້າງ ອອກຂາ ທີ່ພາໃຫ້ມີການຕັດສິນຄະດີຜິດພາດ;
4. ກັກສໍານວນຄະດີ, ກົດໜ່ວງເອກະສານ ເພື່ອຫາຜົນປະໂຫຍດຈາກການດໍາເນີນຄະດີ;
5. ເປີດເຜີຍຄວາມລັບ ກ່ອນການຕັດສິນຄະດີ ເພື່ອແລກກັບຜົນປະໂຫຍດໃດໜຶ່ງ;
6. ທວງ, ຮຽກ, ຮັບເອົາສິນບົນຈາກຄູ່ຄວາມ;
7. ເປັນທີ່ປຶກສາທາງດ້ານກົດໝາຍ, ພົວພັນກັບຄູ່ຄວາມ ເພື່ອຫາຜົນປະໂຫຍດຈາກຄະດີ;
8. ປິດບັງ, ຊຸກເຊື່ອງເອກະສານ, ຫຼັກຖານ ທີ່ມີຢູ່ໃນສໍານວນຄະດີ;
9. ມີພຶດຕິກໍາອື່ນ ທີ່ຜິດຕໍ່ຈັນຍາທໍາ ແລະ ເປັນການລະເມີດກົດໝາຍ.

**ມາດຕາ 60 ຂໍ້ຫ້າມສຳລັບຜູ້ເຂົ້າຮ່ວມໃນການດຳເນີນຄະດີ**

ຫ້າມຜູ້ເຂົ້າຮ່ວມໃນການດຳເນີນຄະດີ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ບັງຄັບ ນາບຂູ່ພະນັກງານສານປະຊາຊົນ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ;

2. ລາຍງານ, ສະໜອງຂໍ້ມູນ, ເອກະສານ ບໍ່ຖືກກັບຄວາມຈິງ, ຊຸກເຊື່ອງ, ທຳລາຍຂໍ້ມູນ, ເອກະສານ ທີ່ເປັນຫຼັກຖານໃນການດຳເນີນຄະດີ;

3. ຫຼົບຫຼີກການມາໃຫ້ການຕໍ່ສານ;

4. ແຊກແຊງ, ຊີ້ນຳ ການດຳເນີນຄະດີ;

5. ໃຫ້ສິນບົນ ພະນັກງານທີ່ດຳເນີນຄະດີ;

6. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍ ພະນັກງານສານປະຊາຊົນ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 61 ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ ແລະ ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງການດຳເນີນການຕັດສິນ ແລະ ພິພາກສາຄະດີ;

2. ຂົ່ມຂູ່, ທຳຮ້າຍພະນັກງານສານປະຊາຊົນ;

3. ມີການກະທຳ ທີ່ພາໃຫ້ການຕັດສິນຄະດີ ບໍ່ໄດ້ຮັບຄວາມເປັນທຳ;

4. ໝິ່ນປະໝາດ, ປ້ອຍດ່າ, ນິນທາ, ໃສ່ຮ້າຍພະນັກງານສານປະຊາຊົນ;

5. ປົກປິດ, ເຊື່ອງອຳ, ທຳລາຍຫຼັກຖານທີ່ກ່ຽວຂ້ອງກັບຄະດີ ແລະ ປົກປ້ອງຜູ້ກະທຳຜິດ;

6. ຍົກຍ້າຍຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ ແລະ ຜູ້ພິພາກສາຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ໂດຍບໍ່ມີມະຕິຂອງຄະນະປະຈຳສະພາແຫ່ງຊາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ວັນສ້າງຕັ້ງ, ງົບປະມານ, ເຄື່ອງໝາຍ, ເຄື່ອງແບບ, ກາໝາຍ, ບັດຜູ້ພິພາກສາ ແລະ ຕາປະທັບ

**ມາດຕາ 62 ວັນສ້າງຕັ້ງສານປະຊາຊົນ**

ວັນສ້າງຕັ້ງ ສານປະຊາຊົນ ແມ່ນ ວັນທີ 15 ສິງຫາ 1982.

**ມາດຕາ 63 (ປັບປຸງ) ງົບປະມານຂອງສານປະຊາຊົນ**

ງົບປະມານຂອງສານປະຊາຊົນທຸກຂັ້ນ ໃຫ້ຂຶ້ນກັບສາຍຕັ້ງ ໂດຍແມ່ນສານປະຊາຊົນສູງສຸດເປັນຜູ້ສ້າງແຜນ ແລະ ນຳສະເໜີຂໍການອະນຸມັດຕາມກົດໝາຍ.

ງົບປະມານຂອງສານທະຫານ ແມ່ນ ຂຶ້ນກັບກະຊວງປ້ອງກັນປະເທດ.

ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ມີ ດັດສະນີ ຂັ້ນເງິນເດືອນສະເພາະ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 64 ເຄື່ອງໝາຍ, ເຄື່ອງແບບ, ກາໝາຍ ແລະ ບັດຜູ້ພິພາກສາ**

ເຄື່ອງໝາຍ, ເຄື່ອງແບບ, ກາໝາຍຂອງພະນັກງານສານປະຊາຊົນ ແມ່ນ ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ ຕາມການສະເໜີຂອງປະທານສານປະຊາຊົນສູງສຸດ.

ບັດຜູ້ພິພາກສາ ແມ່ນ ປະທານສານປະຊາຊົນສູງສຸດ ເປັນຜູ້ອອກໃຫ້.

**ມາດຕາ 65 (ປັບປຸງ) ຕາປະທັບຂອງສານປະຊາຊົນ**

ຕາປະທັບຂອງປະທານ ແລະ ຄະນະສານຂອງສານປະຊາຊົນແຕ່ລະຂັ້ນ ກຳນົດ ດັ່ງນີ້:

ຕາປະທັບຂອງປະທານສານ ເປັນຮູບວົງມົນ ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບເທິງວົງມົນ ຂຽນຊື່ສານປະຊາຊົນຂັ້ນຂອງຕົນ, ເບື້ອງລຸ່ມຂຽນວ່າປະທານ ຊຶ່ງຂັ້ນດ້ວຍດາວຫ້າແຈ.

ຕາປະທັບຂອງຄະນະສານ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບເທິງວົງມົນ ຂຽນຊື່ສານປະຊາຊົນຂັ້ນຂອງຕົນ, ເບື້ອງລຸ່ມຂຽນຊື່ຄະນະສານ ຊຶ່ງຂັ້ນດ້ວຍດາວຫ້າແຈ.

ຕາປະທັບຂອງຈ່າສານ ເປັນຮູບວົງມົນ, ຢູ່ກາງວົງມົນຂຽນວ່າ ຈ່າສານ, ເນື້ອໃນຢູ່ຂອບເທິງວົງມົນ ຂຽນຊື່ສານປະຊາຊົນຂັ້ນຂອງຕົນ, ເບື້ອງລຸ່ມຂຽນ ຊື່ຄະນະສານ ຊຶ່ງຂັ້ນດ້ວຍດາວຫ້າແຈ.

ກົງຈັກບໍລິຫານຂອງສານປະຊາຊົນ ມີຕາປະທັບສຳລັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 66 ນະໂຍບາຍຕໍ່ຜູ້ມີຜົນງານ**

ພະນັກງານສານປະຊາຊົນ ທີ່ໄດ້ປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ ເຮັດໃຫ້ການຕັດສິນ ແລະ ພິພາກສາຄະດີ ມີຄວາມຖືກຕ້ອງ ແລະ ຍຸຕິທຳ ແລະ ຕັ້ງໜ້າພັດທະນາລະບົບສານປະຊາຊົນໃຫ້ມີປະສິດທິພາບ, ໂປ່ງໃສ ແລະ ທັນສະໄໝ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ສຳລັບຜູ້ເຂົ້າຮ່ວມໃນການດຳເນີນຄະດີ, ບຸກຄົນ ແລະ ການຈັດຕັ້ງອື່ນ ຫາກມີຄວາມຈິງໃຈ, ໃຫ້ຄວາມຮ່ວມມືຕໍ່ການດຳເນີນຄະດີ ແລະ ພັດທະນາລະບົບສານປະຊາຊົນ ກໍຈະໄດ້ຮັບນະໂຍບາຍຕາມລະບຽບການ.

**ມາດຕາ 67 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ພະນັກງານສານປະຊາຊົນ, ຜູ້ເຂົ້າຮ່ວມໃນການດຳເນີນຄະດີ, ບຸກຄົນ ແລະ ການຈັດຕັ້ງອື່ນ ທີ່ລະເມີດກົດໝາຍສະບັບນີ້ ແລະ ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ, ກຽດສັກສີ, ຊື່ສຽງ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການ ສຶກສາອົບ

ຮົມ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ ພ້ອມທັງໃຊ້ແທນ ຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 68 ການຈັດຕັ້ງປະຕິບັດ**

ລັດຖະບານ ແລະ ສານປະຊາຊົນສູງສຸດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 69 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍສານປະຊາຊົນ ສະບັບເລກທີ 09/ສພຊ ລົງວັນທີ 26 ພະຈິກ 2009.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້